

ຄະນະພົວພັນຕ່າງປະເທດສູນກາງພັກ

Committee for External Relations of the Party Central Committee

I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ 01 - 04
II. ການເຄື່ອນໄຫວຂອງ ການນຳຂັ້ນສູງ 05 - 06
III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ 07 - 09
IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ 10 - 12

ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ເດືອນຕຸລາ 2026

ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la

I. ສະພາບການພື້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

1. ສະພາບການພື້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

1) ພັກກອມມູນິດຫວຽດນາມ

ໃນລະຫວ່າງວັນທີ 5-8 ຕຸລາ 2026, ກອງປະຊຸມຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສະໄໝທີ XIV ໄດ້ໄຂຂຶ້ນທີ່ ນະຄອນຫຼວງຮ່າໂນ້ຍ ພາຍໃຕ້ການເປັນປະທານຂອງ ສະຫາຍ ໂຕ ເລີ່ມ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສສ ຫວຽດນາມ. ກອງປະຊຸມໄດ້ປຶກສາຫາລື ແລະ ຮັບຮອງເອົາຫຼາຍບັນຫາສຳຄັນ ເປັນຕົ້ນແມ່ນ: ໂຄງຮ່າງການສະຫຼຸບ 100 ປີ ແຫ່ງການນຳພາຂອງພັກ, ທິດທາງການພັດທະນາປະເທດໃນ 100 ປີຕໍ່ໜ້າ, ໂຄງຮ່າງການສະຫຼຸບ 40 ປີ ແຫ່ງການປະຕິບັດແຜນນະໂຍບາຍກໍ່ສ້າງປະເທດໃນໄລຍະຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ແລະ ການພິຈາລະນາປັບປຸງກົດລະບຽບຂອງພັກ. ພ້ອມກັນນີ້, ຍັງໄດ້ຮັບຮອງເອົາລະບຽບການໃໝ່ກ່ຽວກັບວຽກງານກວດກາ, ມາດຕະການວິໄນຂອງພັກ, ມະຕິສະບັບໃໝ່ ວ່າດ້ວຍວຽກງານພະນັກງານ ແລະ ບຸກຄະລາກອນ, ພ້ອມທັງແຜນຍຸດທະສາດແຫ່ງຊາດກ່ຽວກັບການດຶງດູດ, ນຳໃຊ້ ແລະ ພັດທະນາບຸກຄະລາກອນ ໃນບັນດາຂະແໜງການ ແລະ ຂົງເຂດຈຸດສຸມ ເພື່ອຊຸກຍູ້ການພັດທະນາປະເທດຊາດໃຫ້ວ່ອງໄວ ແລະ ຍືນຍົງ. ສຳລັບຄາດໝາຍເສດຖະກິດ-ສັງຄົມ ໃນປີ 2027, ກອງປະຊຸມໄດ້ເຫັນດີສູ້ຊົນໃຫ້ ລວມຍອດຜະລິດຕະພັນພາຍໃນ (GDP) ເຕີບໂຕຢ່າງໜ້ອຍ 10%, ຄວບຄຸມດັດສະນີລາຄາຜູ້ບໍລິໂພກ (CPI) ໃຫ້ຢູ່ສະເລ່ຍປະມານ 4.5% ແລະ ຮັກສາສະຖຽນລະພາບເສດຖະກິດມະຫາພາກ. ສ່ວນວຽກງານງົບປະມານ ແມ່ນເນັ້ນການຮັບປະກັນຄວາມສົມດຸນການແບ່ງປັນລາຍຮັບລະຫວ່າງສູນກາງ ແລະ ທ້ອງຖິ່ນ, ພ້ອມທັງຈັດສັນແຫຼ່ງທຶນເພີ່ມເຕີມເຂົ້າໃນການປະຕິຮູບເງິນເດືອນຢ່າງເປັນຮູບປະທຳ.

ກອງປະຊຸມຄັ້ງທີ 02 ຂອງສະພາແຫ່ງຊາດ ຫວຽດນາມ ຊຸດທີ XVI ໄດ້ໄຂຂຶ້ນ ໃນວັນທີ 17 ຕຸລາ 2026 ໂດຍແບ່ງອອກເປັນ 2 ໄລຍະ ຄື: ໄລຍະທີ 1 ແຕ່ວັນທີ 17 ຕຸລາ - 14 ພະຈິກ 2026 ແລະ ໄລຍະທີ 2 ແຕ່ວັນທີ 20-21 ພະຈິກ 2026, ຊຶ່ງມີກຳນົດປິດກອງປະຊຸມໃນວັນທີ 23 ພະຈິກ 2026. ໃນກອງປະຊຸມຄັ້ງນີ້, ສະພາແຫ່ງຊາດຈະພິຈາລະນາ ແລະ ຮັບຮອງເອົາຮ່າງກົດໝາຍ ແລະ ມະຕິສຳຄັນ ລວມທັງໝົດ 43 ສະບັບ. ໃນນັ້ນ ປະກອບມີການປັບປຸງປະມວນກົດໝາຍອາຍາ, ວິທີພິຈາລະນາຄະດີອາຍາ, ກົດໝາຍທີ່ດິນ, ທຸລະກິດອະສັງຫາລິມະຊັບ, ທີ່ຢູ່ອາໄສ, ງົບປະມານແຫ່ງລັດ, ການພັດທະນາວິສາຫະກິດຂະໜາດນ້ອຍ-ກາງ ແລະ ກົດໝາຍອື່ນໆ. ນອກຈາກນີ້, ຍັງຈະພິຈາລະນາດັດແກ້ປະມວນກົດໝາຍແຮງງານ, ຄວາມສະເໝີພາບຍິງ-ຊາຍ, ການປະກັນສັງຄົມ ແລະ ໃຫ້ຄວາມເຫັນຕໍ່ຮ່າງກົດໝາຍໃໝ່ອີກ 04 ສະບັບ ເຊິ່ງກວມເອົາຂົງເຂດການຂົນສົ່ງທາງນ້ຳ, ຄວາມປອດໄພດ້ານອາຫານ ແລະ ການພັດທະນາອຸດສາຫະກຳວັດທະນະທຳ. ພ້ອມດຽວກັນນັ້ນ, ກອງປະຊຸມຍັງຈະຫົບຫວນບົດລາຍງານການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ແລະ ພິຈາລະນາຮັບຮອງມະຕິຍົກເລີກການກໍ່ສ້າງໂຄງການເສັ້ນທາງໂຮ່ຈິມິນ ລວມທັງມະຕິວ່າດ້ວຍນະໂຍບາຍການລົງທຶນໃນໂຄງການເປົ້າໝາຍແຫ່ງຊາດ ໄລຍະປີ 2026-2035 ທີ່ກ່ຽວຂ້ອງກັບການປ້ອງກັນ ແລະ ຕ້ານອາດຊະຍາກຳ.

2) ພັກກອມມູນິດຈີນ

ວັນທີ 30 ກັນຍາ 2026, ສປ ຈີນ ໄດ້ຈັດພິທີສະເຫຼີມສະຫຼອງວັນສະຖາປະນາປະເທດ ຄົບຮອບ 77 ປີ ຢ່າງຍິ່ງໃຫຍ່ ຢູ່ຫໍສະພາປະຊາຊົນແຫ່ງຊາດ, ນະຄອນຫຼວງປັກກິ່ງ. ໃນໂອກາດນີ້, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດ, ປະທານຄະນະກຳມະການການທະຫານສູນກາງຈີນ ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ກ່າວຄຳປາໄສ ໂດຍມີເນື້ອໃນສຳຄັນບາງຕອນວ່າ: ຕະຫຼອດໄລຍະ 77 ປີຜ່ານມາ, ພັກກອມມູນິດຈີນ ໄດ້ສາມັກຄີ ແລະ ນຳພາປະຊາຊົນສູ້ຊົນສ້າງສິ່ງມະຫັດ ສະຈັນສອງຢ່າງ ຄື: ການພັດທະນາເສດຖະກິດຢ່າງວ່ອງໄວ ແລະ ການຮັກສາສະຖຽນລະພາບທາງສັງຄົມຢ່າງຍາວນານ. ປັດຈຸບັນ, ຈີນ ໄດ້ບັນລຸເປົ້າໝາຍສູ້ຊົນ 100 ປີ ປະການທີ 1 ໃນການສ້າງສັງຄົມອີ່ມໜຳສຳລານຢ່າງຮອບດ້ານແລ້ວ ແລະ ກຳລັງບຸກບືນກ້າວໄປສູ່ເປົ້າໝາຍ 100 ປີ ປະການທີ 2 ຄື ການສ້າງປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງໃຫ້ສຳເລັດຢ່າງຮອບດ້ານ. ພ້ອມດຽວກັນ, ສະຫາຍ ຍັງໄດ້ເນັ້ນໜັກຕື່ມວ່າ: ຈີນ ຈະສືບຕໍ່ຜັນຂະຫຍາຍທິດທາງ “ປະເທດດຽວ ສອງລະບອບ” ຢ່າງເດັດດ່ຽວ, ສະໜັບສະໜູນ ຮົງກົງ ແລະ ມາກາວ ເຊື່ອມໂຍງເຂົ້າກັບການພັດທະນາລວມຂອງຊາດໃຫ້ດີກວ່າເກົ່າ. ພ້ອມທັງຈະລົງເລິກການແລກປ່ຽນ ແລະ ຮ່ວມມືລະຫວ່າງສອງຝັ່ງ

ຊ່ອງແຄບໄຕ້ຫວັນ, ຕໍ່ຕ້ານອິດທິກຳລັງທີ່ຫວັງແບ່ງແຍກ ໄຕ້ຫວັນ ເປັນເອກະລາດຢ່າງເດັດຂາດ ເພື່ອຊຸກຍູ້ພາລະກິດອັນຍິ່ງໃຫຍ່ແຫ່ງການທ້ອນໂຮມປະເທດຊາດເຂົ້າເປັນເອກະພາບ. ນອກຈາກນີ້, ຈີນ ຍັງຈະສືບຕໍ່ຍຶດໝັ້ນນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ ແລະ ເປັນເຈົ້າຕົນເອງ, ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ເພື່ອເປັນສ່ວນໜຶ່ງໃນການເພີ່ມພະລັງທາງບວກ ແລະ ຄວາມໝັ້ນຄົງ ໃຫ້ແກ່ໂລກທີ່ພວມປະເຊີນກັບຄວາມປັ່ນປ່ວນ ແລະ ຜັນແປຢ່າງສັບ ສົນ ໃນປັດຈຸບັນ.

3) ພັກກອມມູນິດກູບາ

ວັນທີ 2 ຕຸລາ 2026, ສະຫາຍ ມີແກນ ດີເອັດສ-ກາແນນ ເບີຣມູເດັດສ (Miguel Diaz-Canel Bermudez), ເລຂາທິໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ. ກູບາ ແລະ ສະຫາຍ ມານູເອັນ ມາເຣໂຣ ກຣຸສ (Manuel Marrero Cruz), ນາຍົກລັດຖະມົນຕີ ໄດ້ອອກຖະແຫຼງການຮ່ວມ ໂດຍຊີ້ແຈງວ່າ: ປັດຈຸບັນ ສ.ອາເມຣິກາ ກຳລັງດຳເນີນສິ່ງຄາມທຸກຮູບແບບຕ້ານ ກູບາ, ເຊິ່ງລວມເຖິງການປິດລ້ອມຮອບດ້ານ ເພື່ອສະກັດກັ້ນການສະໜອງນ້ຳມັນເຊື້ອໄຟ, ການເຮັດສິ່ງຄາມທາງຈິດຕະສາດ, ເສດຖະກິດ-ການຄ້າ, ການສື່ສານ ແລະ ວັດທະນະ ທຳ. ຖະແຫຼງການຍັງລະບຸຕື່ມວ່າ: ໃນເວທີສະຫະປະຊາຊາດ (ສປຊ), ຜູ້ນຳ ສ.ອາເມຣິກາ ໄດ້ກ່າວຫາລັດຖະບານ ກູບາ ວ່າ ບໍລິຫານປະເທດຫຼົ້ມເຫຼວ. ແຕ່ໃນຄວາມເປັນຈິງ, ສ.ອາເມຣິກາ ເປັນຜູ້ກົດດັນ ແລະ ວາງມາດຕະການບີບບັງຄັບປະເທດອື່ນໆ ເຊິ່ງເປັນການລະເມີດອະທິປະໄຕ, ສິດທິຂັ້ນພື້ນຖານ ແລະ ກົດໝາຍສາກົນ. ການກະທຳດັ່ງກ່າວ ໂດຍສະເພາະການຍົກຖານະໂຍບາຍ “ອາເມຣິກາ ມາກ່ອນ” ແມ່ນການທຳລາຍລະບຽບໂລກຢ່າງຈະແຈ້ງ. ເຖິງຢ່າງໃດກໍຕາມ, ຜູ້ນຳ ກູບາ ຢືນຢັນວ່າ ປະຊາຊົນ ກູບາ ທຸກຄົນຈະສືບຕໍ່ປົກປ້ອງຜືນແຜ່ນດິນອັນຄົບຖ້ວນຂອງຕົນຢ່າງເດັດດ່ຽວ ພ້ອມທັງພະຍາຍາມຟື້ນຟູ ແລະ ປະຕິຮູບເສດຖະກິດ ໂດຍອີງໃສ່ກຳລັງແຮງຂອງຕົນເອງ ຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມສະບັບໃໝ່ ທີ່ປະກອບມີ 176 ມາດຕະການ ເຊິ່ງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ອຳນາດປະຊາຊົນແລ້ວ.

ວັນທີ 10 ຕຸລາ 2026, ສ.ກູບາ ໄດ້ຈັດພິທີສະເຫຼີມສະຫຼອງວັນປະກາດເອກະລາດ ຄົບຮອບ 158 ປີ (10 ຕຸລາ 1868 -10 ຕຸລາ 2026) ຢ່າງເປັນທາງການ.ໃນພິທີດັ່ງກ່າວ, ສະຫາຍ ໂຮເຊ ຣາມອນ ມອນເຕອາກູໂດ ຣຸຍ (José Ramón Monteagudo Ruiz), ເລຂາທິການສູນກາງພັກ ແລະ ຫົວໜ້າຄະນະກະສິກຳ-ສະບຽງອາຫານ ສູນກາງພັກກອມມູນິດ ໄດ້ຂຶ້ນມີຄຳເຫັນ ໂດຍໄດ້ຍົກໃຫ້ເຫັນເຖິງປະຫວັດສາດການຕໍ່ສູ້ຂອງປະຊາຊົນ ກູບາ ພາຍໃຕ້ການນຳພາຂອງ ສະຫາຍ ກາໂລສ ມານູເອນ ເດ ເຊດເປເດດ (Carlos Manuel de Céspedes). ການລຸກຮືຂຶ້ນຄັ້ງນັ້ນ ແມ່ນເພື່ອຕໍ່ຕ້ານການກົດຂີ່ຂູດຮີດຂອງຈັກກະພັດແອດສະປາຍ ຈົນກ້າວໄປສູ່ການປະກາດເອກະລາດຂອງ ກູບາ ເຊິ່ງໄດ້ຮັບການຍອມຮັບຈາກປະຊາຄົມໂລກຢ່າງກວ້າງຂວາງ. ສະຫາຍ ມອນເຕອາກູໂດ ຍັງໄດ້ຊີ້ໃຫ້ເຫັນວ່າ: ພາຍຫຼັງການປະກາດເອກະລາດ, ສ.ອາເມຣິກາ ພັດໄດ້ແຊກແຊງ ແລະ ສວຍໃຊ້ ກູບາ ເປັນຫົວເມືອງຂຶ້ນຮູບແບບໃໝ່. ສະພາບການດັ່ງກ່າວ ໄດ້ນຳໄປສູ່ການຕໍ່ສູ້ປົດປ່ອຍປະເທດຊາດໃນໄລຍະຕໍ່ມາ ພາຍໃຕ້ການນຳພາຂອງພັກກອມມູນິດກູບາ ໂດຍສະຫາຍ ຟີແດນ ກາສໂຕຣ ຣຸດສ໌ (Fidel Castro Ruz), ເຊິ່ງສາມາດໂຄ່ນລົ້ມລັດຖະບານຝ່າຍຂວາຈັດ ແລະ ຍາດໄດ້ໄຊຊະນະຢ່າງສົມບູນໃນວັນທີ 01 ມັງກອນ 1959. ໃນໂອກາດດຽວກັນນີ້, ສະຫາຍ ມີແກນ ດີອາດ-ກາແນນ ເບີມູເດດ (Miguel Díaz-Canel Bermúdez), ເລຂາທິໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ ໄດ້ກ່າວຊີ້ນຳຕື່ມວ່າ: ສະຫາຍ ຟີແດນ ກາສະໂຕຣ ຄືຜູ້ນຳການປະຕິວັດ ທີ່ພາ ກູບາ ຫຼຸດພົ້ນຈາກການຄອບງຳຂອງທຶນນິຍົມຈັກກະພັດ ແລະ ສ້າງຕັ້ງລັດສັງຄົມນິຍົມແຫ່ງທຳອິດໃນພາກພື້ນອາເມຣິກາລາຕິນ. ການປະຕິຮູບຢ່າງຮອບດ້ານ ແລະ ການສ້າງບຸກຄະລາກອນທີ່ເຂັ້ມແຂງໃນທຸກລະດັບ ໄດ້ກາຍເປັນພື້ນຖານສຳຄັນ ໃນການປົກປັກຮັກສາໝາກຜົນຂອງການປະຕິວັດໃຫ້ຍືນຍົງຕະຫຼອດ 67 ປີຜ່ານມາ. ເຖິງແມ່ນວ່າ ກູບາ ຈະປະເຊີນກັບການປິດລ້ອມ ແລະ ມາດຕະການຂວ້ຳບາດຝ່າຍດຽວຈາກ ສ.ອາເມຣິກາ, ແຕ່ກໍສາມາດຍືນຍົງຄົງຕົວມາໄດ້ຈົນເຖິງປັດຈຸບັນ. ຄວາມສຳເລັດດັ່ງກ່າວ ແມ່ນໝາກຜົນຂອງການນຳພາຈາກພັກກອມມູນິດ ກູບາ ທີ່ໝູນໃຊ້ລັດທິມາກ-ເລນິນ ແລະ ແນວຄິດຂອງ ສະຫາຍ ຟີແດນ ກາສໂຕຣ, ລວມທັງນະໂຍບາຍເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ ໂດຍບໍ່ຈຳແນກລະບອບການເມືອງ. ສິ່ງນີ້ເຮັດໃຫ້ ກູບາ ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກປະຊາຄົມໂລກ, ໂດຍສະເພາະການອອກມະຕິຂອງສະຫະປະຊາຊາດ ທີ່ຮຽກຮ້ອງໃຫ້ຍົກເລີກການປິດລ້ອມຕໍ່ ກູບາ ຢ່າງຕໍ່ເນື່ອງ.

2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

ສປ ຈີນ ຈັດການຊ້ອມຮົບປະຈຳປີ 2026: ນັບແຕ່ວັນທີ 15 ຕຸລາ - 30 ພະຈິກ 2026, ກອງທັບເຮືອປົດປ່ອຍປະຊາຊົນຈີນ (PLA Navy) ຈະດຳເນີນການຊ້ອມຮົບດ້ວຍລູກປືນແທ້ ປະຈຳປີ 2026 ໃນ 05 ພື້ນທີ່ນ່ານນ້ຳສຳຄັນ ຄື: ທະເລເຫຼືອງ (Yellow Sea), ທະເລໂບຮາຍ (Bohai Sea), ທະເລຈີນຕາເວັນອອກ (East China Sea) ແລະ ທະເລຈີນໃຕ້ (South China Sea). ການຝຶກຊ້ອມດັ່ງກ່າວ ຄາດວ່າຈະດຳເນີນໄປໃນໄລຍະດຽວກັນກັບການຝຶກຊ້ອມທາງທະຫານຮ່ວມ ລະຫວ່າງ ສ.ອາເມຣິກາ ແລະ ຍີ່ປຸ່ນ ທີ່ພວມຂະຫຍາຍວົງກວ້າງອອກ, ເຊິ່ງອາດສົ່ງຜົນກະ ທົບຕໍ່ສະຖານະການໃນໄຕ້ຫວັນ. ຢ່າງໃດກໍຕາມ, ສປ ຈີນ ໄດ້ອອກມາຖະແຫຼງຢືນຢັນວ່າ ການຝຶກຊ້ອມຄັ້ງນີ້ ແມ່ນການປະຕິບັດງານປົກກະຕິປະຈຳປີໃນນ່ານນ້ຳຂອງຕົນ ແລະ ບໍ່ໄດ້ແນໃສ່ປະເທດໃດໜຶ່ງໂດຍສະເພາະ.

ສະພາບການແຫຼມເກົາຫຼີ: ສປປ ເກົາຫຼີ ໄດ້ດຳເນີນການຍິງທົດລອງລູກສອນໄຟໄລຍະກາງຈຳນວນ 3 ລູກ ລົງສູ່ທະເລທາງພາກຕາເວັນອອກ. ເຫດການດັ່ງກ່າວເກີດຂຶ້ນພາຍຫຼັງ ທ່ານ ນາງ ກິມ ໂຍ ຈ່ອງ (Kim Yo Jong), ເຈົ້າໜ້າທີ່ລະດັບສູງ ທັງເປັນນ້ອງສາວຂອງຜູ້ນຳ ສປປ ເກົາຫຼີ ໄດ້ປະຕິເສດຂໍ້ຮຽກຮ້ອງຂອງ ສ.ເກົາຫຼີ ທີ່ຕ້ອງການໃຫ້ຝ່າຍ ສປປ ເກົາຫຼີ ອອກມາຂໍໂທດຕໍ່ກໍລະນີທະຫານ ສ.ເກົາຫຼີ 2 ຄົນ ຢຽບກັບລະເບີດຈົນໄດ້ຮັບບາດເຈັບສາຫັດ ຂະນະປະຕິບັດໜ້າທີ່ລາດຕະເວນຕາມແນວຊາຍແດນ. ນັບແຕ່ຕົ້ນປີ 2026 ເປັນຕົ້ນມາ, ສປປ ເກົາຫຼີ ໄດ້ດຳເນີນການຍິງທົດລອງລູກສອນໄຟແລ້ວຫຼາຍກວ່າ 10 ຄັ້ງ ໂດຍ ສປປ ເກົາຫຼີ ລະບຸວ່າ ການທົດລອງບາງຄັ້ງແມ່ນດຳເນີນໄປເພື່ອທົດສອບລະບົບອາວຸດຊະນິດໃໝ່, ຂະນະທີ່ການທົດລອງບາງຄັ້ງກໍເປັນການຕອບໂຕ້ຕໍ່ການຊ້ອມຮົບຮ່ວມ ລະຫວ່າງ ສ.ອາເມຣິກາ ແລະ ສ.ເກົາຫຼີ ຢູ່ໃນພາກພື້ນ.

3. ພາກພື້ນເອີຣົບ-ອາເມຣິກາ

ຄວາມຂັດແຍ່ງລະຫວ່າງ ອູແກຣນ-ຣັດເຊຍ: ທັງສອງຝ່າຍໄດ້ດຳເນີນການໂຈມຕີຕອບໂຕ້ກັນ ດ້ວຍລູກສອນໄຟ ແລະ ໂດຣນ ຢ່າງໜັກໜ່ວງ, ສິ່ງຜົນໃຫ້ມີຜູ້ເສຍຊີວິດ, ບາດເຈັບ ແລະ ໂຄງລ່າງພື້ນຖານດ້ານພະລັງງານໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ. ຂະນະດຽວກັນ, ສາຍພົວພັນລະຫວ່າງ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ແລະ ທ່ານ ວະໂລດີເມຍ ເຊເລນສະກີ ໄດ້ຊຸດໂຊມລົງຢ່າງໜັກ. ເຫດການນີ້ເກີດຂຶ້ນພາຍຫຼັງທີ່ ສ.ອາເມຣິກາ ຊູ່ຈະຕັດການສະໜັບສະໜຸນດ້ານການຂ່າວ ແລະ ມີລາຍງານກ່ຽວກັບຂໍ້ຕົກລົງນ້ຳມັນກາຊວນ ລະຫວ່າງ ສ.ອາເມຣິກາ ແລະ ຣັດເຊຍ. ທ່ານ ໂດນັນ ທຣຳ ໄດ້ສະແດງຄວາມບໍ່ພໍໃຈຕໍ່ກໍລະນີທີ່ ອູແກຣນ ໂຈມຕີໂຮງກັ່ນນ້ຳມັນຂອງ ຣັດເຊຍ ເຊິ່ງສົ່ງຜົນໃຫ້ຕົ້ນທຶນພະລັງງານເພີ່ມສູງຂຶ້ນ ແລະ ກະທົບຕໍ່ຄະແນນສຽງຂອງພັກຣີພັບບລີກັນ ກ່ອນການເລືອກຕັ້ງກາງສະໄໝ. ເພື່ອເປັນການຕອບໂຕ້, ທ່ານ ເຊເລນສະກີ ໄດ້ວິພາກວິຈານວ່າ ສ.ອາເມຣິກາ ກຳລັງເອນອຽງໄປທາງ ຣັດເຊຍ, ພ້ອມທັງຢືນຢັນວ່າ ອູແກຣນ ຈະບໍ່ປະຕິບັດຕາມຂໍ້ຮຽກຮ້ອງທີ່ໃຫ້ຢຸດການໂຈມຕີເປົ້າໝາຍດ້ານພະລັງງານຂອງ ຣັດເຊຍ. ໃນຂະນະດຽວກັນ, ເມື່ອວັນທີ 12 ຕຸລາ 2026, ສະຫະພາບເອີຣົບ (EU) ໄດ້ຮັບຮອງມາດຕະການຂວ້ຳບາດຊຸດໃໝ່ຕໍ່ ຣັດເຊຍ ໂດຍແນໃສ່ບຸກຄົນ ແລະ ບໍລິສັດທີ່ກ່ຽວຂ້ອງກັບອຸດສາຫະກຳພະລັງງານ, ລູກສອນໄຟ ແລະ ໂດຣນ ເພື່ອເພີ່ມແຮງກົດດັນທາງເສດຖະກິດ. ອີກດ້ານໜຶ່ງ, ຣັດເຊຍ ກໍໄດ້ປະຕິເສດຂໍ້ສະເໜີຢຸດຍິງຊົ່ວຄາວ 60 ວັນ ຂອງ ອູແກຣນ ໂດຍຢືນຢັນວ່າ ຕ້ອງການແກ້ໄຂຄວາມຂັດແຍ່ງດັ່ງກ່າວໃນຮູບແບບໄລຍະຍາວ.

ການເລືອກຕັ້ງທົ່ວໄປບຣາຊິນ: ວັນທີ 4 ຕຸລາ 2026, ບຣາຊິນ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຮອບທີ 1 ຢ່າງເປັນທາງການ, ໂດຍມີຜູ້ລົງສະໝັກເລືອກຕັ້ງຈາກ 13 ພັກການເມືອງ. ການເລືອກຕັ້ງຄັ້ງນີ້ ມີປະຊາຊົນອອກມາໃຊ້ສິດປ່ອນບັດຫຼາຍກວ່າ 125 ລ້ານຄົນ ຈາກຈຳນວນຜູ້ມີສິດເລືອກຕັ້ງທັງໝົດ 158.7 ລ້ານຄົນ. ຜົນການນັບຄະແນນເບື້ອງຕົ້ນຜິບວ່າ: ທ່ານ ຟຣາວິໂອ ນັງເຕ້ດສ໌ ໂບນໂຊນາໂຣ (Flávio Nantes Bolsonaro) ອາຍຸ 45 ປີ, ອະດີດສະມາຊິກສະພາສູງລັດ ຣິໂອ ເດ ຈາເນໂຣ (Rio de Janeiro) ຈາກພັກເສລີນິຍົມ ຊຶ່ງເປັນພັກຝ່າຍຂວາ ແລະ ເປັນລູກຊາຍຂອງອະດີດປະທານາທິບໍດີ ຊາອີ ໂບນໂຊນາໂຣ (Jair Bolsonaro), ໄດ້ຮັບຄະແນນສຽງນຳໜ້າທີ່ 47.05%. ທ່ານໄດ້ເນັ້ນນະໂຍບາຍປາບປາມອາຊະຍາກຳ, ຫຼຸດອັດຕາພາສີ ແລະ ໃຫ້ຄຳໝັ້ນສັນຍາວ່າຈະຮ່ວມມືຢ່າງໃກ້ຊິດກັບ ສ.ອາເມຣິກາ ພາຍໃຕ້ການນຳພາຂອງ ທ່ານ ໂດນັນ ທຣຳ. ຂະນະທີ່ອັນດັບ 2 ແມ່ນ ທ່ານ ຫຼຸຍ ອິນາຊິໂອ ລູລາ ດາ ຊິນວາ (Luiz Inácio Lula da Silva) ອາຍຸ 80 ປີ, ປະທານາທິບໍດີ ບຣາຊິນ ຄົນປັດຈຸບັນ ຈາກພັກແຮງງານບຣາຊິນ ຊຶ່ງເປັນພັກກຳ

ອຳນາດຝ່າຍຊ້າຍ, ໄດ້ຮັບຄະແນນສຽງ 45.14%. ທ່ານໄດ້ລົງສະໝັກເປັນສະໄໝທີ 4 ເພື່ອສືບຕໍ່ໂຄງການທາງສັງຄົມ ທີ່ມີເປົ້າໝາຍແກ້ໄຂບັນຫາຄວາມເຫຼື່ອມລ້ຳ. ສ່ວນອັນດັບ 3 ແມ່ນ ທ່ານ ໂອໂກສະໂຕ ກູຣີ (Augusto Cury) ອາຍຸ 68 ປີ, ນັກຝີຊິກສາດ ແລະ ນັກຂຽນ ຈາກພັກອາວັງເຕ (Avante) ໄດ້ຮັບ 2.89%. ສຳລັບຜູ້ສະໝັກທ່ານອື່ນໆ ແມ່ນ ໄດ້ຄະແນນສຽງບໍ່ເຖິງ 2.3%. ອີງຕາມກົດໝາຍວ່າດ້ວຍການເລືອກຕັ້ງຂອງ ບຣາຊິນ ໄດ້ກຳນົດວ່າ: ຜູ້ຊະນະການ ເລືອກຕັ້ງຈະຕ້ອງໄດ້ຮັບຄະແນນສຽງ 40% ຂຶ້ນໄປ ແລະ ຕ້ອງມີຄະແນນຫຼາຍກວ່າຜູ້ໄດ້ອັນດັບສອງ 10% ຂຶ້ນໄປ ຈຶ່ງ ຈະຖືວ່າເປັນຜູ້ຊະນະເດັດຂາດ. ເນື່ອງຈາກບໍ່ມີຜູ້ສະໝັກທ່ານໃດບັນລຸເງື່ອນໄຂດັ່ງກ່າວ, ທ່ານ ແອນເດ ໂຣກຣິດແກັດ (André Rodrigues), ປະທານຄະນະກຳມະການເລືອກຕັ້ງ ຈຶ່ງໄດ້ປະກາດຈັດການປ່ອນບັດເລືອກຕັ້ງປະທານາທິບໍດີ ຮອບທີ 2 ຂຶ້ນໃນວັນທີ 25 ຕຸລາ 2026. ການແຂ່ງຂັນໃນຮອບຕັດສິນນີ້ ຈະເປັນການຊີງໄຊລະຫວ່າງ ທ່ານ ຫຼຸຍ ອິນາ ຊີໂອ ລູລາ ດາ ຊິນວາ ແລະ ທ່ານ ຝຣານຊິໂອ ນັ່ງເຕັດສ໌ ໂນນໂຊນາໂຣ ເພື່ອຄັດເລືອກເອົາຜູ້ທີ່ຈະຂຶ້ນດຳລົງຕຳແໜ່ງເປັນ ປະທານາທິບໍດີ ບຣາຊິນ ຄົນຕໍ່ໄປ.

ການປະທ້ວງໃນແບນຊິກ: ວັນທີ 09 ຕຸລາ 2026, ປະຊາຊົນ ແບນຊິກ ປະມານ 50,000 ຄົນ ໄດ້ອອກມາ ຊຸມນຸມປະທ້ວງຢູ່ ນະຄອນຫຼວງບຣຸກແຊນ (Brussels) ເພື່ອຕໍ່ຕ້ານມາດຕະການຫຼຸດຜ່ອນງົບປະມານຂອງລັດຖະ ບານ. ຜູ້ເຂົ້າຮ່ວມການຊຸມນຸມໃນຄັ້ງນີ້ ປະກອບມີ ກຳມະກອນ, ນັກສຶກສາ, ຄູ-ອາຈານ ແລະ ສະມາຊິກສະຫະພັນແຮງ ງານ. ສາເຫດຕົ້ນຕໍຂອງການປະທ້ວງ ແມ່ນມາຈາກຄວາມບໍ່ພໍໃຈຕໍ່ນະໂຍບາຍຂອງລັດຖະບານ ທີ່ຕ້ອງການຫຼຸດລາຍ ຈ່າຍເພື່ອແກ້ໄຂບັນຫາໜີ້ສາທາລະນະ. ກຸ່ມນັກສຶກສາ ໄດ້ຄັດຄ້ານການຂຶ້ນຄ່າທຳນຽມການຮຽນ ແລະ ການຕັດ ງົບປະມານດ້ານການສຶກສາ ໂດຍກັງວົນວ່າຈະເຮັດໃຫ້ຜູ້ມີລາຍໄດ້ໜ້ອຍເຂົ້າເຖິງການສຶກສາໄດ້ຍາກ. ສ່ວນກຸ່ມ ກຳມະກອນ ແລະ ປະຊາຊົນທົ່ວໄປ ແມ່ນມີຄວາມກັງວົນຕໍ່ການຕັດສະຫວັດດີການສັງຄົມ ເຊິ່ງຈະເຮັດໃຫ້ຄ່າຄອງຊີບ ເພີ່ມສູງຂຶ້ນ ແລະ ກະທົບຕໍ່ຄຸນນະພາບຊີວິດການເປັນຢູ່. ເຖິງແມ່ນວ່າການຊຸມນຸມສ່ວນໃຫຍ່ຈະດຳເນີນໄປດ້ວຍຄວາມ ສະຫງົບ, ແຕ່ກໍມີກຸ່ມຜູ້ປະທ້ວງບາງພາກສ່ວນ ໄດ້ປະທະກັບເຈົ້າໜ້າທີ່ຕຳຫຼວດ ຢູ່ບໍລິເວນໃກ້ກັບສະຖານີລົດໄຟກາງ. ກຸ່ມດັ່ງກ່າວໄດ້ໂຍນສິ່ງຂອງ, ຈູດໄຟ ແລະ ທຳລາຍຊັບສິນ, ເຮັດໃຫ້ເຈົ້າໜ້າທີ່ຈຳເປັນຕ້ອງໃຊ້ແກັສນ້ຳຕາ ແລະ ລົດສີດ ນ້ຳ ເພື່ອຄວບຄຸມສະຖານະການ. ເຫດການດັ່ງກ່າວ ເຮັດໃຫ້ມີຜູ້ຖືກຈັບກຸມທັງໝົດ 21 ຄົນ, ໃນນັ້ນມີເຍົາວະຊົນເຖິງ 13 ຄົນ.

4.ພາກພື້ນຕາເວັນອອກກາງ

ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ: ຄວາມເຄັ່ງຕຶງລະຫວ່າງ ອີຣານ ແລະ ສ.ອາເມຣິກາ ຍັງສືບຕໍ່ທະວີ ຄວາມຮຸນແຮງຂຶ້ນ, ໂດຍສະເພາະຢູ່ຊ່ອງແຄບຮໍມຸດ. ອີຣານ ໄດ້ເພີ່ມການໂຈມຕີໃສ່ກຳປັ່ນຂົນສົ່ງສິນຄ້າ ເພື່ອຮັກສາ ລາຄານ້ຳມັນໂລກໃຫ້ສູງຂຶ້ນ ແລະ ສ້າງແຮງກົດດັນຕໍ່ການເລືອກຕັ້ງກາງສະໄໝຂອງ ສ.ອາເມຣິກາ. ພ້ອມກັນນີ້, ອີຣານ ຍັງມີແຜນຂະຫຍາຍຂອບເຂດການໂຈມຕີໄປສູ່ ອ່າວໂອມານ (Gulf of Oman) ແລະ ນ່ານນ້ຳໃກ້ແຄມຝັ່ງປະເທດ ກາ ຕາ, ລວມເຖິງການຂູ່ວ່າ ອາດຈະປິດຊ່ອງແຄບຮໍມຸດຢ່າງສົມບູນໃນໄວໆນີ້. ອີກດ້ານໜຶ່ງ, ກຸ່ມຮູຕີ ໃນເຢເມນ ໄດ້ໂຈມ ຕີສະໜາມບິນສາກົນ ຄິງ ຄາລິດ (King Khalid) ທີ່ນະຄອນຫຼວງຣິຢາດ ຂອງ ອາຣັບບີ ຊາອຸດິດ, ສິ່ງຜົນໃຫ້ມີຜູ້ເສຍ ຊີວິດ 13 ຄົນ ແລະ ບາດເຈັບຫຼາຍກວ່າ 300 ຄົນ. ຕໍ່ເຫດການດັ່ງກ່າວຫຼາຍກວ່າ 20 ປະເທດ ລວມທັງ ສປ ຈີນ, ສ.ອາ ເມຣິກາ, ອິນເດຍ ແລະ ອົງການຈັດຕັ້ງສາກົນ ໄດ້ອອກຖະແຫຼງການປະນາມຢ່າງໜັກໜ່ວງ. ຂະນະດຽວກັນ, ສ.ອາເມຣິ ກາ ກໍໄດ້ສັ່ງການໃຫ້ກອງ ທັບກຽມພ້ອມຕອບໂຕ້ກຸ່ມຮູຕີ.

II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

1. ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງໂທລະເລກອວຍພອນເຖິງ ຄະນະກຳມະການສູນກາງພັກກອມມູນິດຈີນ

ເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນຈີນ ຄົບຮອບ 77 ປີ, ໃນນາມ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ລັດຖະບານ ແລະ ປະຊາຊົນລາວ ກໍຄື ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນອັນອົບອຸ່ນ ແລະ ພອນໄຊອັນປະເສີດມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງ ຄະນະກຳມະການສູນກາງພັກກອມມູນິດຈີນ, ລັດຖະບານ ແລະ ປະຊາຊົນຈີນ ທຸກຖ້ວນໜ້າ.

ການສະຖາປະນາ ສາທາລະນະລັດ ປະຊາຊົນຈີນ ໃນວັນທີ 01 ຕຸລາ 1949 ຖືເປັນບາດລ້ຽວປະຫວັດສາດສຳຄັນແຫ່ງ ການເລີ່ມຕົ້ນສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. ຕະຫຼອດໄລຍະ 77 ປີຜ່ານມານັ້ນ, ພັກກອມມູນິດຈີນ ໄດ້ສືບຕໍ່ເປັນຄົນທຸງນຳໜ້າທີ່ສະຫງ່າງາມ ໃນການນຳພາປະຊາຊົນຈີນ ສ້າງສາພັດທະນາປະເທດຈີນ ຕາມທິດສັງຄົມນິຍົມ; ກ້າວເຂົ້າສູ່ໄລຍະໃໝ່, ແນວຄິດ ສີ ຈິ້ນຜິງ ວ່າດ້ວຍສັງຄົມນິຍົມ ທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝໃໝ່ ໄດ້ກາຍເປັນເຂັມຊີ້ທິດເຍືອງທາງ ໃຫ້ແກ່ ພາລະກິດສ້າງສັງຄົມນິຍົມ ຢູ່ ສປ ຈີນ, ເຮັດໃຫ້ບົດບາດການນຳພາຂອງ ພັກກອມມູນິດຈີນ ສືບຕໍ່ມີຄວາມໜັກແໜ້ນ, ເຂັ້ມແຂງ, ພາລະກິດສ້າງສາສັງຄົມນິຍົມຢູ່ປະເທດຈີນ ໄດ້ມີຜົນສຳເລັດຢ່າງຮອບດ້ານ ແບບກ້າວກະໂດດ, ເສດຖະກິດມີການຂະຫຍາຍຕົວຢ່າງຕ່ອງໂວຕໍ່ເນື່ອງ ແລະ ນັບມື້ນັບກ້າວເຂົ້າສູ່ຄວາມທັນສະໄໝເຂັ້ມແຂງ, ສັງຄົມມີຄວາມກົມກຽວປອງດອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນເລື້ອຍໆ, ບົດບາດ ແລະ ອິດທິພົນ ຂອງພັກກອມມູນິດຈີນ ແລະ ລັດຖະບານຈີນ ກໍ່ນັບມື້ນັບສູງເດັ່ນຂຶ້ນ ໃນເວທີພາກພື້ນ ແລະ ສາກົນ.

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຮອບດ້ານ, ໃຫຍ່ຫຼວງເປັນປະຫວັດການ ທີ່ປະຊາຊົນຈີນ ຍາດມາໄດ້ ແລະ ຖືຜົນສຳເລັດດັ່ງກ່າວ ເປັນການປຸກລະດົມກຳລັງໃຈອັນແຮງກ້າແກ່ພວກຂ້າພະເຈົ້າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງຕົນ ໃນປັດຈຸບັນ.

ພັກ, ລັດ ແລະ ປະຊາຊົນລາວ ຍາມໃດກໍ່ຖືສຳຄັນ ຕໍ່ການເສີມຂະຫຍາຍສາຍພົວພັນຮ່ວມມືກັບ ພັກ, ລັດຖະບານ ແລະ ປະຊາຊົນຈີນ ແລະ ມີຄວາມຍິນດີຮ່ວມກັບ ພັກ, ລັດ ແລະ ປະຊາຊົນຈີນ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ໝັ້ນຄົງ ໜຽວແໜ້ນໃນທຸກສະພາບການຂອງຍຸກໃໝ່ ໃຫ້ໄດ້ຮັບການເພີ່ມພູນຄູນສ້າງ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ກໍຄື ປະກອບສ່ວນ ເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ແລະ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ຕໍ່ ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອອັນໃຫຍ່ຫຼວງ ແກ່ພາລະກິດປະຕິວັດຂອງປະຊາຊົນລາວ ໃນເມື່ອກ່ອນ ກໍຄື ໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນະປະເທດຊາດ ໃນປັດຈຸບັນ.

ຂໍອວຍພອນໃຫ້ປະຊາຊົນຈີນ ໂດຍພາຍໃຕ້ການນຳພາອັນຖືກຕ້ອງ ຂອງ ພັກກອມມູນິດຈີນ ອັນມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງນັ້ນ ຈົ່ງສືບຕໍ່ປະສົບຜົນສຳເລັດອັນໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດການສ້າງປະເທດຈີນ ສັງຄົມນິຍົມທັນສະໄໝ ທີ່ມີສີສັນພິເສດຂອງປະເທດຈີນ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XX ຂອງພັກກອມມູນິດຈີນ.

ຂໍອວຍພອນໃຫ້ ສະຫາຍ ຈົ່ງມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າ ເກົ່າ ໃນພາລະກິດອັນມີກຽດສູງສົ່ງຂອງສະຫາຍ.

2. ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນ ເຖິງ ສະຫາຍ ກົມ ເຈີງ ອຸນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ, ປະທານກົດຈະການແຫ່ງລັດ ສປປ ເກົາຫຼີ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 81 ປີ

ວັນທີ 10 ຕຸລາ 2026, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ກົມ ເຈີງ ອຸນ, ເລຂາທິການ ໃຫຍ່ພັກແຮງງານເກົາຫຼີ, ປະທານກົດຈະການແຫ່ງລັດ ສປປ ເກົາຫຼີ ເນື່ອງໃນໂອກາດວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 81 ປີ (10 ຕຸລາ 1945-10 ຕຸລາ 2026), ຊຶ່ງມີເນື້ອໃນດັ່ງນີ້:

ເນື່ອງໃນໂອກາດ ວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 81 ປີ (10/10/1945-10/10/2026), ຂ້າພະເຈົ້າ ຕາງ ໜ້າພັກ, ລັດ ແລະ ປະຊາຊົນລາວ ບັນດາເຜົ່າ ຂໍສະແດງຄວາມຂໍ່ານັບຊົມເຊີຍອັນອົບອຸ່ນ ແລະ ສົ່ງຄຳອວຍພອນໄຊອັນ ປະເສີດ ມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ, ສະມາຊິກພັກ ແລະ ປະຊາຊົນເກົາຫຼີ ອ້າຍນ້ອງທຸກຖ້ວນໜ້າ.

ຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ໃນຕະຫຼອດໄລຍະ 81 ປີ ແຫ່ງການກໍາເນີດ ແລະ ເຕີບ ໃຫຍ່ຂະຫຍາຍຕົວຂອງ ພັກແຮງງານເກົາຫຼີ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ອ້າຍນ້ອງ ສາມາດຍາດໄດ້ຜົນ ສໍາເລັດອັນໃຫຍ່ຫຼວງຫຼາຍດ້ານ ໃນການປົກປັກຮັກສາໝາກຜົນຂອງການປະຕິວັດ ໄວ້ໄດ້ຢ່າງໝັ້ນຄົງ, ການເມືອງມີ ສະຖຽນລະພາບ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ ແລະ ທັນສະໄໝ, ເສດຖະກິດໄດ້ ຮັບການພັດທະນາຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງ ປະຊາຊົນເກົາຫຼີ ນັບມື້ໄດ້ຮັບການຍົກລະດັບຂຶ້ນເທື່ອລະກ້າວ.

ເຊື່ອໝັ້ນວ່າ, ພາຍໃຕ້ການນໍາພາ-ຊີ້ນໍາ ອັນເຂັ້ມແຂງຂອງ ພັກແຮງງານເກົາຫຼີ ທີ່ມີ ສະຫາຍ ກົມ ເຈີງ ອຸນ ເປັນ ຜູ້ນໍາໜ້າ, ພັກ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ຈະສາມາດບັນລຸຜົນສໍາເລັດໃນການປະຕິບັດ ບັນດາມະຕິຂອງ ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ສືບຕໍ່ນໍາພາ-ຊີ້ນໍາ ປະຊາຊົນ ສປປ ເກົາຫຼີ ຍາດໄດ້ຜົນສໍາເລັດຍິ່ງໃຫຍ່ກວ່າເກົ່າ ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ສ້າງສັງຄົມນິຍົມໃຫ້ຮັ່ງມີເຂັ້ມ ແຂງ.

ຂ້າພະເຈົ້າ ຕີລາຄາສູງຜົນສໍາເລັດການພົບປະສອງຝ່າຍກັບ ສະຫາຍ ໃນໂອກາດ ການຢ້ຽມຢາມລັດຖະກິດ ສປປ ເກົາຫຼີ ໃນທ້າຍປີ 2025 ຜ່ານມາ ແລະ ຍິນດີສືບຕໍ່ຮ່ວມກັບ ສະຫາຍ ກໍຄື ພັກ, ລັດ ສປປ ເກົາຫຼີ ໃນການຜັນຂະຫຍາຍ ຜົນການພົບປະດັ່ງກ່າວ ເພື່ອປະກອບເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນ ແລະ ການຮ່ວມມື ອັນເປັນມູນເຊື້ອ ທີ່ມີ ມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ສປປ ລາວ-ສປປ ເກົາຫຼີ ໃຫ້ສືບຕໍ່ໄດ້ຮັບການ ເສີມຂະຫຍາຍຍິ່ງໆຂຶ້ນເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ກໍຄື ພາລະກິດແຫ່ງການເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ສະຫາຍ ກົມ ເຈີງ ອຸນ ຈົ່ງມີພະລານາໄມສົມບູນ, ມີຄວາມຜາສຸກ, ປະສົບຜົນສໍາເລັດ ໃນພາລະກິດອັນສູງສົ່ງຂອງ ສະຫາຍ.

III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

1. ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ສົ່ງໂທລະເລກອວຍພອນ ເຖິງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ.

ເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນຈີນ ຄົບຮອບ 77 ປີ, ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ, ພວກຂ້າພະເຈົ້າ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ຄະນະພັກ-ຄະນະນຳ ແລະ ພະນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທຸກຖ້ວນໜ້າ.

ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ຮອບດ້ານ ທີ່ ປະຊາຊົນຈີນອ້າຍນ້ອງ ຍາດມາໄດ້ ຕະຫຼອດໄລຍະ 77 ປີ ແຫ່ງ ການສະຖາປະນາ ສາທາລະນະລັດ ປະຊາຊົນຈີນ. ສປ ຈີນ ມີສະຖຽນລະພາບທາງການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມອີ່ມໜຳສຳລານ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ ເນື່ອງ ຕາມທິດທັນເປັນທັນສະໄໝ, ຖານະບົດບາດ ແລະ ອິດທິພົນ ຂອງ ພັກ, ລັດຖະບານຈີນ ໃນເວທີພາກພື້ນ ແລະ ສາກົນ ນັບມື້ນັບສູງເດັ່ນຂຶ້ນ; ຜົນສຳເລັດດັ່ງກ່າວ ຖືເປັນແຮງບັນດານໃຈອັນແຮງກ້າ ໃຫ້ແກ່ ພັກ, ລັດຖະບານ ແລະ ປະຊາຊົນລາວ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມເສັ້ນທາງສັງຄົມນິຍົມ.

ພວກຂ້າພະເຈົ້າ ຕີລາຄາສູງຕໍ່ຜົນສຳເລັດການພົບປະ ລະຫວ່າງ ສອງເລຂາທິການໃຫຍ່, ປະທານປະເທດລາວ-ຈີນ ໃນ ໂອກາດທີ່ ຜູ້ນຳສູງສຸດພັກ, ລັດ ລາວ ຢ້ຽມຢາມລັດຖະກິດ ຢູ່ ສປ ຈີນ ແຕ່ວັນທີ 2-6 ມິຖຸນາ 2026 ຜ່ານມາ, ອັນໄດ້ເປັນ ການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃຫ້ໄດ້ຮັບການເສີມຂະຫຍາຍຢ່າງຮອບດ້ານ; ໃນການຢ້ຽມຢາມຄັ້ງນີ້, ສອງຝ່າຍ ໄດ້ອອກຖະແຫຼງການຮ່ວມ ວ່າ ດ້ວຍ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ເຂັ້ມແຂງໜຽວແໜ້ນໃນທຸກສະພາບການຂອງຍຸກໃໝ່, ເຊິ່ງເປັນການຍົກ ລະດັບການພົວພັນຮ່ວມມື ລາວ-ຈີນ ຂຶ້ນສູ່ລະດັບໃໝ່; ຜົນສຳເລັດດັ່ງກ່າວນັ້ນ ແມ່ນປະສະຈາກບໍ່ໄດ້ ການປະກອບສ່ວນ ຢ່າງຕັ້ງໜ້າ ຂອງ ສອງຄະນະພົວພັນຕ່າງປະເທດສູນກາງພັກ; ພວກຂ້າພະເຈົ້າ ຍິນດີຮ່ວມມື ກັບ ຄະນະພົວພັນຕ່າງປະເທດ ສູນກາງພັກກອມມູນິດຈີນ ເພີ່ມທະວີບົດບາດການເປັນເສນາທິການ ໃຫ້ແກ່ ສອງສູນກາງພັກ ລາວ-ຈີນ ໃນການຊຸກຍູ້ ການຈັ້ງຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ທີ່ການນຳສູງສຸດ 2 ພັກ, 2 ລັດ ເຫັນດີເປັນເອກະພາບນຳກັນ ໃຫ້ມີຜົນສຳເລັດ ຢ່າງຕັ້ງໜ້າ ແລະ ໃຫ້ມີປະສິດທິຜົນທີ່ສູງກວ່າເກົ່າ.


ໃນໂອກາດອັນສະຫງ່າລາສີນີ້, ຂໍອວຍພອນໃຫ້ ປະຊາຊົນຈີນອ້າຍນ້ອງ ໂດຍພາຍໃຕ້ການນຳພາອັນຖືກຕ້ອງຂອງ ພັກ ກອມມູນິດຈີນ ອັນມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງນັ້ນ ຈົ່ງປະສົບຜົນສຳເລັດອັນໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນ ພາລະກິດແຫ່ງການສ້າງສັງຄົມນິຍົມທີ່ທັນສະໄໝ ຕາມສີສັນພິເສດຂອງຈີນ ທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ XX ຂອງພັກ ກອມມູນິດຈີນ ວາງອອກຢ່າງມີໄຊ.

ຂໍອວຍພອນໃຫ້ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທຸກ ສະຫາຍ ຈົ່ງມີສຸຂະພາບແຂງແຮງ, ພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດອັນໃໝ່ ໃຫຍ່ຫຼວງກວ່າ ເກົ່າ ໃນໜ້າທີ່ອັນມີກຽດຂອງສະຫາຍ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ເຂັ້ມແຂງໜຽວແໜ້ນ ໃນທຸກສະພາບການຂອງຍຸກ ໃໝ່ ກໍ່ຄື ໄມຕີຈິດມິດຕະພາບ ລະຫວ່າງ ຄະນະພົວພັນຕ່າງປະເທດ ຂອງສອງສູນກາງພັກ ລາວ-ຈີນ ພວກເຮົາ ຈົ່ງແຕກ ດອກອອກຜົນຍິ່ງໆຂຶ້ນ.

2. ເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ-ຂອງຊາດ ແລະ ປະກາດການຈັດຕັ້ງຕຳແໜ່ງບໍລິຫານຂັ້ນກົມ ແລະ ຂັ້ນພະແນກ ຂອງ ຄຕພ






ໃນວັນທີ 12 ຕຸລາ 2026, ທີ່ ຄະນະພິວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີເຜີຍແຜ່ເຊື່ອມຊຶມ ມູນເຊື້ອວັນປະກາດເອກະລາດ ແລະ ວັນການທູດລາວ ຄົບຮອບ 81 ປີ (12 ຕຸລາ 1945 – 12 ຕຸລາ 2026) ແລະ ປະກາດການຈັດຕັ້ງຕຳແໜ່ງບໍລິຫານຂັ້ນກົມ ແລະ ຂັ້ນພະແນກ. ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄຕພ, ມີບັນດາສະຫາຍ ຄະນະນຳ ຄຕພ, ຄະນະກົມ, ຄະນະພະແນກ ແລະ ພະນັກງານ ຄຕພ ເຂົ້າຮ່ວມ.

ໃນພິທີ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ຫວນຄືນມູນເຊື້ອປະຫວັດຄວາມເປັນມາ ອັນພິລະອາດຫານ ໃນຂະບວນການຕໍ່ສູ້ຂອງປະຊາຊົນລາວ ຕ້ານຜູ້ຮຸກຮານ ພາຍໃຕ້ການນຳພາຂອງວິລະຊົນ, ວິລະບຸລຸດຜູ້ເກັ່ງກ້າ ໃນໄລຍະທີ່ບໍ່ທັນມີພັກນຳພາ ແລະ ການຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນ ພາຍໃຕ້ການນຳພາຂອງ ພັກກອມມູ ນິດອິນດູຈີນ ນັບແຕ່ປີ 1930. ພາຍຫຼັງທີ່ໄດ້ສ້າງຕັ້ງອົງຄະນະພັກແຄ້ວນລາວ ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນລາວ ຍາດໄດ້ໄຊຊະນະຢ່າງເນື່ອງນິດລຽນຕິດ ຈົນສາມາດປະກາດເອກະລາດຕໍ່ຊາວໂລກ ໃນວັນທີ 12 ຕຸລາ 1945 ແລະ ສະຖາປະນາ ສປປ ລາວ ໃນວັນທີ 02 ທັນວາ 1975. ພ້ອມນັ້ນ, ຍັງຍົກໃຫ້ເຫັນບັນດາຜົນສຳເລັດຕໍ່ກັບ ວຽກງານການຕ່າງປະເທດໃນໄລຍະໃໝ່ ເຊິ່ງເປັນການຍົກຖານະບົດບາດຂອງ ສປປ ລາວ ສູ່ເວທີສາກົນ.

ໃນໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ ບັນດາສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ເຊິ່ງເປັນການມອບໝາຍໜ້າທີ່ການເມືອງດ້ວຍຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກຂັ້ນເທິງ ກໍຄືພະນັກງານພາຍໃນ ຄຕພ, ທັງນີ້ ກໍເພື່ອແນໃສ່ເຮັດໃຫ້ວຽກງານຂອງ ຄຕພ ມີຄວາມໜັກແໜ້ນເຂັ້ມແຂງ ສາມາດຜັນຂະຫຍາຍແນວທາງຂອງພັກ-ລັດ ທີ່ຕິດພັນກັບແຜນງານ-ໂຄງການຂອງ ຄຕພ ສະໄໝທີ III ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້. ນອກນັ້ນ, ກໍຍັງໄດ້ເນັ້ນໜັກໃຫ້ບັນດາ ສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງສືບຕໍ່ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ການເມືອງ ຂອງຕົນໃຫ້ສູງກວ່າເກົ່າ ທັງເປັນແບບຢ່າງໃນການປະຕິບັດໜ້າທີ່ວຽກງານຢ່າງຮອບດ້ານ ແລະ ເປັນແກນກາງຮັກສາຄວາມສາມັກຄີພາຍໃນ.

3. ຄະນະຜູ້ແທນ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ, ສປ ຈີນ ເຂົ້າຢ້ຽມຂ່ຳນັບ ຮອງຫົວໜ້າຄະນະພິວພັນຕ່າງປະເທດສູນກາງພັກ ປປ ລາວ





ວັນທີ 21 ຕຸລາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ວາລະໄຊ ເລ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ຄະນະຜູ້ແທນ ຄະນະພັກກອມມູນິດຈີນ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ນຳໂດຍ ສະຫາຍ ຫຼີວ ຈ້ຽນ, ຮອງຫົວໜ້າ ສະຖາບັນກໍ່ສ້າງພະນັກງານ ນະຄອນປາຍເຊີ້ ພ້ອມດ້ວຍຄະນະ ທັງໝົດ 4 ສະຫາຍ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ປາຖະກະຖາ ຢູ່ ສປປ ລາວ ແຕ່ວັນທີ 19-23 ຕຸລາ 2026.

ໃນໂອກາດດັ່ງກ່າວ ສະຫາຍ ວາລະໄຊ ເລ່ງສະຫວັດ ໄດ້ສະແດງຄວາມຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍຕໍ່ການມາ ຢ້ຽມຢາມ-ປາຖະກະຖາຫົວຂໍ້ສະເພາະ ຢູ່ ສປປ ລາວ ຂອງຄະນະໃນຄັ້ງນີ້, ຕີລາຄາສູງການພົວພັນຮ່ວມມື ລະຫວ່າງ ສອງ ພັກ ລາວ-ຈີນ ກໍຄື ສປປ ລາວ ກັບ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ໃນໄລຍະຜ່ານມາ ແລະ ປະຈຸບັນ ທີ່ໄດ້ ປະກອບສ່ວນສຳຄັນ ເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດ ທະສາດ ຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ເຂັ້ມແຂງໜຽວແໜ້ນ ໃນທຸກສະພາບການຂອງຍຸກໃໝ່, ທັງເປັນການຈັດຕັ້ງຜັນຂະຫຍາຍ ແຜນການຮ່ວມມື ລະຫວ່າງ ສອງພັກ ລາວ-ຈີນ 2026-2030 ແລະ ຄຳເຫັນຊີ້ນຳທີ່ການນຳຂັ້ນສູງ ຂອງສອງພັກ, ສອງລັດ ລາວ-ຈີນ ໄດ້ຕົກລົງເປັນເອກະພາບກັນ ໃຫ້ ປະກົດຜົນເປັນຈິງ; ໄດ້ສະແດງຄວາມໝາຍໝັ້ນທີ່ຈະສືບຕໍ່ຮ່ວມມືກັບ ຄະນະພັກກອມມູນິດຈີນ ເຂດປົກຄອງຕົນເອງເຜົ່າ ຈ້ວງກວາງຊີ ຈັດຕັ້ງປະຕິບັດ ແຜນການຮ່ວມມືສອງຝ່າຍ ໃຫ້ມີປະສິດທິຜົນສູງ, ຍິນດີຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ແຂວງກວາງຊີ ກັບ ສູນກາງ ແລະ ທ້ອງຖິ່ນຂອງລາວ ເພື່ອເພີ່ມພູນຄູນສ້າງສາຍພົວພັນ ລາວ-ຈີນ ກໍຄື ການຊຸກຍູ້ຈັດຕັ້ງ ປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ເກີດດອກອອກຜົນໃນລະດັບສູງກວ່າເກົ່າ.

ສະຫາຍ ຫຼີວ ຈ້ຽນ ໄດ້ສະແດງຄວາມຂອບໃຈຕໍ່ ສະຫາຍ ວາລະໄຊ ເລ່ງສະຫວັດ ທີ່ໃຫ້ກຽດຕ້ອນຮັບຄະນະ ຢ່າງອົບ ອຸ່ນ, ໄດ້ລາຍງານໃຫ້ຊາບຜົນການຢ້ຽມຢາມ-ປາຖະກະຖາ ຢູ່ ນະຄອນຫຼວງວຽງຈັນ, ລວມທັງຜົນການພົບປະ-ປຶກສາຫາລື ກັບພາກສ່ວນກ່ຽວຂ້ອງຂອງລາວ ກ່ຽວກັບການຈັດຊຸດຝຶກອົບຮົມ ພະນັກງານນຳພາ-ຄຸ້ມຄອງລາວ ຢູ່ເຂດກວາງຊີ ໃນ ໄລຍະຜ່ານມາ ແລະ ໃນຕໍ່ໜ້າ; ຕີລາຄາສູງ ການພົວພັນຮ່ວມມືສອງຝ່າຍ, ໂດຍສະເພາະແມ່ນ ການພົວພັນຮ່ວມມື ລະຫວ່າງ ເຂດກວາງຊີ ກັບ ສປປ ລາວ, ກໍຄື ການປະສານສົມທົບ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ແລະ ພາກສ່ວນກ່ຽວຂ້ອງຂອງລາວ ກັບ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ, ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນ ການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ກໍຄື ແຜນການຮ່ວມມື ສອງພັກ ແລະ ແຜນການຮ່ວມມື ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ກັບ ຄະນະພັກ ເຂດກວາງຊີ, ສປ ຈີນ ໃຫ້ ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ

1. ພິທີປາຖະກະຖາ ວັນສ້າງຕັ້ງພັກແຮງງານ ເກົາຫຼີ ຄົບຮອບ 81 ປີ (10 ຕຸລາ 1945 – 10 ຕຸລາ 2026)





ວັນທີ 02 ຕຸລາ 2026, ສະມາຄົມມິດຕະພາບລາວ-ສປປ ເກົາຫຼີ, ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຮ່ວມ ກັບ ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາ ວັນສ້າງຕັ້ງພັກແຮງງານ ເກົາຫຼີ ຄົບຮອບ 81 ປີ (10 ຕຸລາ 1945-10 ຕຸລາ 2026) ທີ່ນະຄອນຫຼວງວຽງຈັນ.

ໃນພິທີຄັ້ງນີ້, ໃຫ້ກຽດເປັນປະທານຮ່ວມໂດຍ ສະຫາຍ ນາງ ປານີ ກົມດາວົງ, ຮອງເລຂາຄະນະບໍລິຫານງານສູນກາງ ຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫາຍ ນາງ ວິລະວອນ ພັນທະວົງ, ຮອງປະທານກຳມາທິການວັດທະນະທຳສັງຄົມ ແລະ ບັນດາເຜົ່າ, ຮອງປະທານ ສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ ແລະ ສະຫາຍ ລີ ຢົງຊິນ, ເອກອັກຄະລັດຖະທູດວິສາມັນຜູ້ ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ, ຄະນະນຳ, ຄະນະກົມ, ພະແນກ ແລະ ວິຊາການຈາກສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ, ພ້ອມດ້ວຍພະນັກງານຈາກ ສະຖານ ເອກອັກຄະລັກຖະທູດ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ.

ໃນໂອກາດດັ່ງກ່າວ, ສະຫາຍ ລີ ຢົງ ຊິນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຂຶ້ນກ່າວປາຖະກະຖາເຖິງຜົນງານ ແລະ ມູນເຊື້ອແຫ່ງການກໍ່ສ້າງພັກແຮງງານເກົາຫຼີ ອັນມີ ສະຫາຍ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການ ແຫ່ງ ສປປ ເກົາຫຼີ ແລະ ຜູ້ນຳພາແສງສະຫວ່າງແນວຄິດຈູດເຊ່ ເປັນແກນນຳໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ໄດ້ນຳພາປະຊາຊົນ ສປປ ເກົາຫຼີ ເຂົ້າໃນ ຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ແລະ ສະຫາຍ ກິມ ເຈີ ອິນ, ຜູ້ນຳທີ່ຍິ່ງໃຫຍ່, ເລຂາທິການໃຫຍ່ພັກແຮງງານເກົາຫຼີຕະຫຼອດການ, ປະທານ ຄະນະກຳມາທິ ການປ້ອງກັນຊາດ ແຫ່ງ ສປປ ເກົາຫຼີ ຕະຫຼອດການ ເປັນຜູ້ສືບຕໍ່ນຳພາລະກິດດັ່ງກ່າວ, ໃນປັດຈຸບັນ ພາຍໃຕ້ການນຳພາ ຂອງ ສະຫາຍ ກິມ ເຈີ ອຸນ, ຜູ້ນຳທີ່ເຄົາລົບຮັກ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກົດຈະການແຫ່ງລັດ ແຫ່ງ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາວຸດ ແຫ່ງ ສປປ ເກົາຫຼີ ອັນໄດ້ເຮັດໃຫ້ ສປປ ເກົາຫຼີ ມີການ ພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໝັກແໜ້ນ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມ ເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີ ໄດ້ຮັບການປັບປຸງດີ ຂຶ້ນຢ່າງບໍ່ຢຸດຢັ້ງ, ເຊິ່ງເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຖິງສະພາບການຕົວຈິງ ໃນການພັດທະນາ ກໍ່ຄືຜົນສຳເລັດອັນໃຫຍ່ ຫຼວງທີ່ປະຊາຊົນ ສປປ ເກົາຫຼີ ຍາດມາໄດ້. ພ້ອມດຽວກັນນີ້ ສະຫາຍ ເອກອັກຄະລັດຖະທູດ ກໍຍັງໄດ້ຍົກໃຫ້ເຫັນເຖິງ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີ ໃນໄລຍະຜ່ານມາ.

ໃນພິທີດັ່ງກ່າວ ຍັງມີການສະແດງສິນລະປະຂອງ ລາວ ແລະ ສປປ ເກົາຫຼີ ທີ່ເປັນການສ້າງກິດຈະກຳຮ່ວມກັນ ທັງ ເປັນການສະເຫຼີມສະຫຼອງວັນສ້າງຕັ້ງພັກແຮງງານເກົາຫຼີ ຄົບຮອບ 81 ປີ, ເຊິ່ງໄດ້ເຮັດໃຫ້ບັນຍາກາດໃນພິທີດັ່ງກ່າວມີ ຄວາມໝາຍ ແລະ ຄວາມສຳຄັນຕໍ່ການພົວພັນຂອງສອງປະເທດ.

2. ສະມາຄົມມິດຕະພາບ ລາວ–ຈີນ ຕ້ອນຮັບ ຄະນະຜູ້ແທນສະມາຄົມມິດຕະພາບປະຊາຊົນແຂວງຢຸນນານ






ໂດຍຕອບສະໜອງຕາມຄຳເຊີນ ຂອງສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ, ຄະນະຜູ້ແທນສະມາຄົມມິດຕະພາບປະຊາຊົນແຂວງຢຸນນານກັບຕ່າງປະເທດ, ສປ ຈີນ ນຳໂດຍ ສະຫາຍ ນາງ Yang Sheng, ທີ່ປຶກສາລະດັບ 2 ຂອງສະມາຄົມມິດຕະພາບປະຊາຊົນແຂວງຢຸນນານກັບຕ່າງປະເທດ, ສປ ຈີນ ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ແຕ່ວັນທີ 15-17 ຕຸລາ 2026.

ໃນວັນທີ 16 ຕຸລາ 2026, ຄະນະຜູ້ແທນໄດ້ເຂົ້າຢ້ຽມຂ່ຳນັບ ສະຫາຍ ໄຊຊະນະ ສິດທິພອນ, ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ຮອງປະທານ ແລະ ທັງເປັນເລຂາທິການສະມາຄົມມິດຕະພາບ ລາວ-ຈີນ ຂັ້ນ ສູນກາງ. ສະຫາຍ ໄຊຊະນະ ສິດທິພອນ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກ ຂອງຄະນະຜູ້ແທນສະມາຄົມມິດຕະພາບປະຊາຊົນແຂວງຢຸນນານກັບຕ່າງປະເທດ ຖືເປັນການ ປະກອບສ່ວນ ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການສ້າງເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ ທີ່ໝັ້ນຄົງໜຽວແໜ້ນໃນ ທຸກສະພາບການ ຂອງຍຸກໃໝ່ໃຫ້ໄດ້ຮັບການເພີ່ມພູນຄູນສ້າງແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ ລະຫວ່າງ ສອງພັກ, ສອງ ລັດ ແລະ ປະຊາຊົນສອງຊາດ ແລະ ແລະ ຈີນ-ລາວ. ນອກນີ້, ສະຫາຍ ຍັງໄດ້ສະເໜີໃຫ້ ສອງຝ່າຍສ້າງກົນໄກການ ພົວພັນຮ່ວມມືໃຫ້ເປັນຮູບປະທຳຫຼາຍກວ່າເກົ່າເຊັ່ນ: ຊຸກຍູ້ໃຫ້ປະຊາຊົນ, ນັກທຸລະກິດ, ບັນດາຂະແໜງການຕ່າງໆ ຂອງລາວ ແລະ ແຂວງຢຸນໜານໃນມີການຮ່ວມມື ແລະ ແລກປ່ຽນດ້ານການສຶກສາ, ສາທະລະນະສຸກ, ສິນລະປະວັດ ທະນະທຳ, ການທ່ອງທ່ຽວ ແລະ ດ້ານອື່ນໆໃຫ້ມີການຮ່ວມມືຫຼາຍຂຶ້ນ, ພິເສດແມ່ນ ປະຊາຊົນໃນເຂດຊາຍແດນ ລາວ-ຈີນ ມີການໄປມາຫາສູ່ກັນ, ພົບປະປຶກສາຫາລື ແລກປ່ຽນຢ້ຽມຢາມ, ຈັດກິດຈະກຳຮ່ວມກັນ ແລະ ໃຫ້ການສະໜັບສະ ໜູນຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນວັນສຳຄັນຕ່າງໆຂອງພັກຂອງຊາດຂອງລາວ ແລະ ຈີນ ເພື່ອປະກອບສ່ວນສ້າງ ຊາຍແດນແຫ່ງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ.

ສະຫາຍ ນາງ Yang Sheng ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ແຈ້ງໃຫ້ຊາບ ກ່ຽວກັບຈຸດປະສົງ ຂອງການຢ້ຽມຢາມ ໂດຍສະເພາະແມ່ນວຽກງານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມ ມິດຕະພາບປະຊາຊົນແຂວງຢຸນນານກັບຕ່າງປະເທດ ໃຫ້ຊາບ ແລະ ຢືນຢັນວ່າ ສະມາຄົມມິດຕະພາບປະຊາຊົນແຂວງ ຢຸນນານກັບຕ່າງປະເທດ ຈະສືບຕໍ່ເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນຮ່ວມມືກັບສະມາຄົມມິດຕະພາບ ລາວ-ຈີນ ເພື່ອເຮັດບົດບາດເປັນຂົວຕໍ່ທີ່ດີ ຊຸກຍູ້ການພົວພັນຮ່ວມມື ຂອງບັນດາຂະແໜງການທີ່ສອງປະເທດເຄີຍປະຕິບັດຮ່ວມ ກັນ ແລະ ເຫັນດີເປັນເອກະພາບຕາມກົນໄກການຮ່ວມມືທີ່ ສະຫາຍ ຮອງປະທານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນ ສູນກາງໄດ້ຍົກຂຶ້ນ.

3. ພິທີມອບ-ຮັບໜ້າທີ່ລະຫວ່າງ ຄະນະບໍລິຫານງານສະມາຄົມລາວ-ໄທເພື່ອມິດຕະພາບ ຊຸດເກົ່າ ແລະ ຊຸດໃໝ່





ວັນທີ 22 ຕຸລາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີມອບ-ຮັບ ໜ້າທີ່ ລະຫວ່າງ ຄະນະ ບໍລິຫານງານສະມາຄົມ ລາວ-ໄທ ເພື່ອມິດຕະພາບ ຊຸດເກົ່າ ແລະ ຊຸດໃໝ່ ໂດຍການເປັນປະທານຂອງ ສະຫາຍ ບຸນ ເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາ ສະຫາຍ ຄະນະພັກ, ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ໃນພິທີດັ່ງກ່າວ ໄດ້ຮັບຟັງການຜ່ານບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານ ຂອງສະມາ ຄົມ ລາວ-ໄທ ເພື່ອ ມິດຕະພາບ ຕະຫຼອດໄລຍະ 5 ປີຜ່ານມາ, ເຊິ່ງໄດ້ຍົກໃຫ້ເຫັນບັນດາຜົນສຳເລັດໃນການເສີມສ້າງສາຍພົວພັນມິດຕະ ພາບລາວ-ໄທ, ການສົ່ງເສີມທາງດ້ານຮີດຄອງປະເພນີ ແລະ ວັດທະນະທຳ ອັນດີງາມຂອງປະຊາຊົນສອງຊາດ, ການ ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນ ແລະ ການຍາດແຍ່ງເອົາການຊ່ວຍເຫຼືອ ເພື່ອພັດທະນາທາງດ້ານໂຄງລ່າງ ພື້ນຖານການສຶກສາ ແລະ ສາທາລະນະສຸກ ຂອງ ສປປ ລາວ. ພ້ອມນີ້, ກໍຍັງມີຂໍ້ຄົງຄ້າງບາງຈຸດທີ່ຈະຕ້ອງປັບປຸງແກ້ໄຂ ຖອດຖອນບົດຮຽນ ເພື່ອປະຕິບັດທິດທາງແຜນການໃນຕໍ່ໜ້າ ແລະ ໄດ້ຜ່ານມະຕິຕົກລົງ ຂອງ ຄະນະເລຂາທິການສູນ ກາງພັກ ວ່າດ້ວຍການແຕ່ງຕັ້ງ ສະຫາຍ ທຽມ ພົມມະຈັນ, ອະດີດລັດຖະມົນຕີກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນປະທານສະມາຄົມ ລາວ-ໄທ ເພື່ອມິດຕະພາບ ຊຸດໃໝ່.

ໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານອັນ ພົ້ນເດັ່ນຂອງ ບັນດາສະຫາຍ ຄະນະບໍລິຫານງານສະມາຄົມ ລາວ-ໄທ ເພື່ອມິດຕະພາບ ຊຸດເກົ່າ ທີ່ໄດ້ສຸມທຸກກຳລັງແຮງ ຮອບດ້ານເຂົ້າໃນການເຄື່ອນໄຫວວຽກງານຂອງສະມາຄົມ ກໍຄື ວຽກງານການທູດປະຊາຊົນ ເຊິ່ງສາມາດຍາດແຍ່ງເອົາ ການຊ່ວຍເຫຼືອເພື່ອສ້າງພື້ນຖານໂຄງລ່າງດ້ານການສຶກສາ, ສາທາລະນະສຸກ ແລະ ດ້ານອື່ນໆ ໃນ ສປປ ລາວ ລວມມູນ ຄ່າທັງໝົດເປັນເງິນ: 957,825,000 ກີບ, 157,777 ໂດລາ ແລະ 7,150,000 ບາດ. ພ້ອມນັ້ນ, ສະຫາຍ ຍັງໄດ້ມີຄຳ ເຫັນໂອ້ລົມ ຕໍ່ຄະນະບໍລິຫານງານ ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ຊຸດໃໝ່ ທີ່ຈະສືບຕໍ່ປະຕິບັດໜ້າທີ່ສຳຄັນ ແລະ ມີກຽດນີ້ ຈົ່ງນຳພາວຽກງານການເຄື່ອນໄຫວຂອງສະມາຄົມຢ່າງຫ້າວຫັນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າ ທີ່ຂອງຕົນ ທີ່ພັກ-ລັດ ມອບໝາຍໃຫ້ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ, ຄູ່ຮ່ວມຍຸດທະສາດ ເພື່ອການ ຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ ລາວ-ໄທ ໃຫ້ນັບມື້ ມີຄວາມແໜ້ນແຟ້ນ ແລະ ຈະເລີນງອກງາມ ເພື່ອພ້ອມກັນສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ.